| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| **ຊື່ໃບອະນຸຍາດ** | ໃບອະນຸຍາດສ້າງຕັ້ງສະຖາບັນການສຶກສາຂັ້ນສູງ | |
| **ປະເພດຂອງໃບອະນຸຍາດ** | ໃບອະນຸຍາດດໍາເນີນທຸລະກິດ | |
| **ເລກລະຫັດໃບອະນຸຍາດ** | **ວັນທີ** | **ໜ່ວຍງານຮັບຜິດຊອບ** |
| MoES-HED-8 | 10.11.2017 | ກົມການສຶກສາຊັ້ນສູງ |

| ຂໍ້ມູນພື້ນຖານ | |
|---|---|
| **ຮູບແບບການສົ່ງຄໍາຮ້ອງ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ** | P - ການສຶກສາ |
| **ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ** | ສະຖາບັນການສຶກສາຂັ້ນສູງແມ່ນໜຶ່ງໃນສະຖາບັນການສຶກສາທີ່ສໍາຄັນ ດັ່ງນັ້ນ ຈຶ່ງມີຄວາມຈໍາເປັນຕ້ອງຮັບປະກັນວ່າ ຜູ້ທີ່ຈະດໍາເນີນການທຸລະກິດການສຶກສາຂັ້ນສູງດັ່ງກ່າວ ແມ່ນມີຄຸນສົມບັດ ແລະ ຈະສະໜອງການສຶກສາທີ່ໄດ້ຕາມມາດຕະຖານ ຮັບປະກັນນັກສຶກສາທີ່ຈົບຈາກສະຖາບັນດັ່ງກ່າວ |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ສະຖາບັນການສຶກສາຊັ້ນສູງ ຄື ສະຖານການສຶກສາ ທີ່ມີການຈັດຕັ້ງການຮຽນ-ການສອນຫລັກສູດ ຕາມສາຍວິຊາການ ເລີ່ມແຕ່ລະດັບອະນຸປະລິນຍາຂຶ້ນໄປ ໄດ້ແກ່ ວິທະຍາໄລ, ສະຖາບັນ, ວິທະຍາຄານ ແລະ ມະຫາວິທະຍາໄລ |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ບໍ່ມີ |
| **ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ** | 1. ນາຍົກລັດຖະມົນຕີ ອະນຸຍາດການສ້າງຕັ້ງ ສະຖາບັນການສຶກສາຊັ້ນສູງປະເພດ 1 ທຸກຮູບແບບ (ລະດັບຊາດ ແລະ ນານາຊາດ) ຕາມການສະເໜີຂອງກະຊວງສຶກສາທິການ ແລະ ກິລາ ແລະ ການຈັດຕັ້ງຂະແໜງການກ່ຽວຂ້ອງ 2. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ອະນຸມັດການສ້າງຕັ້ງ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ຂອງລະດັບພາກ, ແຂວງ ຫລື ຊຸມຊົນ ແລະ ສະເພາະຂະແໜງການ ຕາມການສະເໜີຂອງອົງການຈັດຕັ້ງ ແລະ |

| ຂໍ້ມູນພື້ນຖານ | |
|---|---|
| | ຂະແໜງການທີ່ກ່ຽວຂ້ອງ 3. ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ມີຄໍາສັ່ງແນະນໍາ ເລກທີ 155/ສສກ, ລົງວັນທີ 31 ມັງກອນ 2013 ບໍ່ອະນຸຍາດໃຫ້ເປີດການສອນ-ການຮຽນຫລັກສູດໃໝ່ ໃນລະດັບປະລິນຍາຕີ ຫລື ສູງກວ່ານັ້ນ ແລະ ອະນຸຍາດໃຫ້ເປີດການສອນ-ການຮຽນຫລັກສູດແຕ່ລະດັບຊັ້ນສູງລົງມາເທົ່ານັ້ນ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 0 | ກະລຸນາຕື່ມຂໍ້ມູນສໍາລັບ ການສຶກສາຊັ້ນສູງລົງມາ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຕ້ອງມີຄວາມພ້ອມທາງດ້ານບຸກຄະລາກອນການສຶກສາ ແລະ ມີຜູ້ຮຽນໃນຈໍານວນທີ່ເໝາະສົມ ແລະ ມີຄວາມພ້ອມໃນການລົງທຶນດ້ານພື້ນຖານໂຄງລ່າງ, ວັດຖຸປະກອບເຕັກນິກ ແລະ ງົບປະມານເພື່ອການບໍລິຫານ-ຄຸ້ມຄອງທີ່ເໝາະສົມ ໂດຍມີເອກະສານຢັ້ງຢືນຄໍ້າປະກັນການລົງທຶນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ 2. ຕ້ອງສະໜອງຫລັກສູດຂອງສະຖາບັນການສຶກສາຊັ້ນສູງແຕ່ລະປະເພດ ແມ່ນຕ້ອງດໍາເນີນການໂດຍສອດຄ່ອງກັບ ຂໍ້ຕົກລົງວ່າດ້ວຍມາດຕະຖານຫລັກສູດແຫ່ງຊາດ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີທີ່ຜູ້ຮ້ອງຂໍ ບໍ່ສາມາດປະຕິບັດຕາມເງື່ອນໄຂ ແລະ ຂໍ້ກໍານົດທີ່ລະບຸໄວ້ໃນກົດໝາຍ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ກະລຸນາຕື່ມຂໍ້ມູນສໍາລັບ ການສຶກສາຊັ້ນສູງລົງມາ |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ບໍ່? | | | ຄໍາຮ້ອງ | |
| ແມ່ນແລ້ວ | 0.00 | 350000.00 | 0.00 | 350000.00 |
| ຄໍາເຫັນ | ອີງຕາມ: ລັດຖະດໍາລັດ ເລກທີ 03/ປທ ຄ່າທໍານຽມສຶກສາຊັ້ນສູງ 200,000 ກີບ ຄ່າທໍານຽມປະລິນຍາຕີ 250,000 ກີບ ຄ່າທໍານຽມປະລິນຍາໂທ 300,000 ກີບ ຄ່າທໍານຽມປະລິນຍາເອກ 350,000 ກີບ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ດໍາລັດວ່າດ້ວຍ ການສຶກສາຊັ້ນສູງ | 177/ລບ | 05.06.2015 | |
| ກົດໝາຍວ່າດ້ວຍ ການສຶກສາ (ສະບັບປັບປຸງ) | 62/ສພຊ | 16.07.2015 | ພາກທີ III ສະຖານການສຶກສາ (ມາດຕາ 29 ຫາມາດຕາ 32) |

| ເອກະສານປະກອບ |
|---|
| ຊື່ເອກະສານ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |